ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------໑໑໑✷໑໑໑----------

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ກົມບຳນານ, ເສຍອົງຄະ ແລະ ພິການ

0966

ເລກທີ______/ຮສສ.ບສພ

ນະຄອນຫຼວງວຽງຈັນ, ວັນທີ 25 NOV 2013

# ແຈ້ງການ

ເຖິງ: ບັນດາ ພະແນກ ຮສສ ແຂວງ ແລະ ນະຄອນຫຼວງວຽງຈັນ, ບັນດາສະມາຄົມ, ອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ແລະ ໜ່ວຍງານຕ່າງໆ ທີ່ເຄື່ອນໄຫວວຽກງານກ່ຽວກັບຄົນພິການ ແລະ ຜູ້ອາຍຸສູງ.

ເລື່ອງ: ຫ້ອງການປະສານງານແຫ່ງຊາດເພື່ອຄົນພິການ ໄດ້ປ່ຽນມາເປັນ ກອງເລຂາຂອງ ຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ແລະ ຜູ້ອາຍຸສູງ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 232/ນຍ, ລົງວັນທີ 6 ກັນຍາ 2013 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການແຫ່ງຊາດເພື່ອຄົນພິການ ແລະ ຜູ້ອາຍຸສູງ.

ກົມບຳນານ, ເສຍອົງຄະ ແລະ ພິການ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ປະຈຸບັນ ລັດຖະບານໄດ້ອອກດຳລັດສະບັບເລກທີ 232/ນຍ ລົງວັນທີ 6 ກັນຍາ 2013 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງ ຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ແລະຜູ້ອາຍຸສູງ ປ່ຽນແທນດຳລັດ 061/ນຍ ແລະ 057/ນຍ, ໃນນີ້ ດຳລັດສະບັບໃໝ່ໄດ້ໂຮມຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ແລະ ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງເຂົ້າກັນ ແລະ ໄດ້ປ່ຽນຊື່ຫ້ອງການປະສານງານແຫ່ງຊາດເພື່ອຄົນພິການ ແລະ ຜູ້ອາຍຸສູງ ຕາມດຳລັດເລກທີ 061/ນຍ ແລະ 057/ນຍ ມາເປັນກອງເລຂາ ຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ແລະຜູ້ອາຍຸສູງ ເຊິ່ງແມ່ນ ທ່ານ ຫົວໜ້າກົມບຳນານ, ເສຍອົງຄະ ແລະ ພິການ ເປັນຫົວໜ້າກອງເລຂາ ດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບດ້ວຍ.

ຫົວໜ້າກົມບຳນານ, ເສຍອົງຄະ ແລະ ພິການ

ກະຊວງແຮງງານແລະສະຫວັດດີການສັງຄົມ ກົມບຳນານເສຍອົງຄະແລະພິການ

ບຸນປອນ ໄຊຍະເສນ